ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເອກະສານລາຍງານການເງິນ
(ທົບທວນຄືນ)

ສຳລັບໄລຍະຫົກເດືອນສິ້ນສຸດ ວັນທີ 30 ມິຖຸນາ 2022

ບົດລາຍງານ ຂອງຜູ້ກວດສອບອິດສະຫຼະໃນການທົບທວນຄືນເອກະສານລາຍງານການເງິນ

ເຖິງ: ຜູ້ຖືຮຸ້ນ ແລະ ສະພາຜູ້ອຳນວຍການ ຂອງບໍລິສັດ ມະຫະທຶນເຊົ່າສິນເຊື່ອ ມະຫາຊົນ

ພວກຂ້າພະເຈົ້າ ໄດ້ດຳເນີນການທົບທວນຄືນ ຂໍ້ມູນທາງການເງິນ ຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ບໍລິສັດ) ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນ ສິ້ນສຸດວັນທີ 30 ມີຖຸນາ 2022, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບໄລຍະຫົກເດືອນສິ້ນສຸດວັນທີດຽວກັນ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ. ຜູ້ບໍລິຫານ ຂອງບໍລິສັດ ມີໜ້າທີຮັບຜິດຊອບໃນການສ້າງ ແລະ ນຳສະເໜີ ເອກະສານລາຍງານການເງິນເພື່ອໃຫ້ສອດຄ່ອງກັບນະໂຍບາຍການບັນຊີ ຕາມທີ່ໄດ້ກຳນົດໄວ້ໃນບົດອະທິບາຍຊ້ອນທ້າຍໃນຂໍ້ທີ 2 ຂອງເອກະສານລາຍງານການເງິນ. ຄວາມຮັບຜິດຊອບ ຂອງພວກເຮົາຄືການອອກບົດລາຍງານ ເພື່ອສະແດງຄວາມເຫັນຕໍ່ເອກະສານລາຍງານການເງິນດັ່ງກ່າວບົນພື້ນຖານການທົບທວນຄືນ ຂອງພວກເຮົາ.


ຂອບເຂດ ການທົບທວນຄືນ

ພວກເຮົາໄດ້ດຳເນີນການທົບທວນຄືນ ໂດຍສອດຄ່ອງກັບມາດຕະຖານ ການທົບທວນຄືນແບບສາກົນ 2410 “ການທົບທວນຄືນເອກະສານລາຍງານການເງິນ ໂດຍຜູ້ກວດສອບ ອິດສະຫຼະ”. ການທົບທວນຄືນເອກະສານລາຍງານການເງິນ ໄດ້ໃຊ້ວິທີການສອບຖາມບຸກຄະລາກອນທີ່ຮັບຜິດຊອບ ຕໍ່ຝ່າຍບັນຊີ-ການເງິນ ແລະ ໄດ້ດຳເນີນການວິໄຈຂໍ້ມູນ ດ້ານການເງິນທີ່ກ່ຽວຂ້ອງ ແລະ ວິທີການອື່ນໆ. ການທົບທວນຄືນໃຫ້ຄວາມເຊື່ອໝັ້ນໜ້ອຍກວ່າການກວດສອບ ເພາະການກວດສອບ ແມ່ນໄດ້ປະຕິບັດຕາມ ມາດຕະຖານການກວດສອບສາກົນ ເພາະສະນັ້ນການທົບທວນຄືນຈຶ່ງບໍ່ສາມາດໃຫ້ຄວາມເຊື່ອໝັ້ນທຽບເທົ່າການກວດສອບ ຕໍ່ສິ່ງທີ່ເປັນສາລະສຳຄັນທັງໝົດ ທີ່ອາດຈະພົບເຫັນໃນການກວດສອບ ຂອງພວກເຮົາໄດ້. ດັ່ງນັ້ນ ພວກເຮົາຈະບໍ່ສະແດງຄວາມເຫັນບົນພື້ນຖານການກວດສອບ.

ສະຫຼຸບ

ບົນພື້ນຖານ ການທົບທວນຄືນຂອງພວກເຮົາ, ບໍ່ມີຫຍັງທີ່ສຳຄັນ ທີ່ເປັນສາເຫດໃຫ້ເຊື່ອວ່າ ເອກະສານລາຍງານການເງິນ ດັ່ງກ່າວ ບໍ່ໄດ້ສະໜອງຂໍ້ມູນທີ່ຖືກຕ້ອງ ໃນລັກສະນະທີ່ຖືໄດ້ວ່າມີຄວາມສຳຄັນຫຼາຍ ຕາມນະໂຍບາຍການບັນຊີ ຂອງບໍລິສັດ ທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຂໍ້ທີ 2 ໃນເອກະສານລາຍງານການເງິນນີ້.

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ



ໂດຍ: ທ່ານ ອະພິສິດ ທ່ຽງຕົ້ງພົນໂຍ
ຜູ້ຖືຮຸ້ນ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 8 ສິງຫາ 2022

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຖານະການເງິນ
ໃນວັນທີ 30 ມິຖຸນາ 2022

	ບິດ ອະທິບາຍ	ທີ່ບທວນຄືນ 30 ມິຖຸນາ 2022 ກີບ	ທີ່ບທວນຄືນ 30 ມິຖຸນາ 2021 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	5	10.925.398.148	13.057.187.126
ສັດສ່ວນໝຸນວຽນຂອງໜີ້ຕ້ອງຮັບສັນຍາເຊົ່າການເງິນ			
ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ	6	50.711.833.655	47.696.091.192
ຊັບສິນຖືໄວ້ເພື່ອຂາຍ, ສຸດທິ	7	220.011.053	262.786.334
ຊັບສິນໝຸນວຽນອື່ນໆ	8	649.877.421	503.095.189
ລວມຊັບສິນໝຸນວຽນ		**62.507.120.277**	**61.519.159.841**
ຊັບສິນບໍ່ໝຸນວຽນ			
ເງິນຝາກຄ້ຳປະກັນເງິນກູ້	9	2.000.000.000	-
ເງິນຝາກທີ່ທະນາຄານແຫ່ງ ສປປ ລາວ		2.000.002.700	2.000.002.700
ໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ			
ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ	6	35.006.656.862	32.091.186.121
ຊັບສິນຄົງທີ່ມີຕົວຕົນ, ສຸດທິ	10	760.912.740	939.382.351
ຊັບສິນຄົງທີ່ບໍ່ມີຕົວຕົນ, ສຸດທິ	11	167.853.834	205.780.698
ຊັບສິນບໍ່ໝຸນວຽນ ອື່ນໆ		109.078.440	174.497.244
ລວມຊັບສິນບໍ່ໝຸນວຽນ		**40.044.504.576**	**35.410.849.114**
ລວມຊັບສິນ		**102.551.624.853**	**96.930.008.955**

ທ່ານ ມານິບ ຕຣີລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 8 ສິງຫາ 2022

ທ່ານ ທອງຖະຫວັນ ທອງແຖມ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 8 ສິງຫາ 2022

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຖານະການເງິນ
ໃນວັນທີ 30 ມິຖຸນາ 2022

	ບິດ ອະທິບາຍ	ທີ່ບທອນຄືນ 30 ມິຖຸນາ 2022 ກີບ	ທີ່ບທອນຄືນ 30 ມິຖຸນາ 2021 ກີບ
ໜີ້ສິນ ແລະ ທຶນເຈົ້າຂອງ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	12	2.146.338.825	4.580.752.344
ໜີ້ຕ້ອງສົ່ງອາກອນລາຍໄດ້		2.174.993.147	2.041.935.197
ເງິນກູ້ຍືມໄລຍະຍາວ - ສັດສ່ວນໝຸນວຽນ	13	19.581.869.916	-
ໜີ້ສິນໝຸນວຽນອື່ນໆ		44.457.758	44.011.600
ລວມໜີ້ສິນໝຸນວຽນ		**23.947.659.646**	**6.666.699.141**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຍືມໄລຍະຍາວ	13	9.229.192.642	17.894.400.000
ໜີ້ສິນບໍ່ໝຸນວຽນອື່ນໆ		225.700.000	217.250.000
ລວມໜີ້ສິນບໍ່ໝຸນວຽນ		**9.454.892.642**	**18.111.650.000**
ລວມໜີ້ສິນ		**33.402.552.288**	**24.778.349.141**
ທຶນເຈົ້າຂອງ			
ທຶນຈົດທະບຽນ		40.000.000.000	40.000.000.000
ສ່ວນເພີ່ມມູນຄ່າຮຸ້ນ		12.832.667.550	12.832.667.550
ກຳໄລສະສົມ			
ຄັງສະສົມຕາມລະບຽບການ		4.785.832.107	4.785.832.107
ກຳໄລສະສົມ ທີ່ຍັງບໍ່ໄດ້ຈັດສັນ		11.530.572.908	14.533.160.157
ລວມທຶນ		**69.149.072.565**	**72.151.659.814**
ລວມໜີ້ສິນ ແລະ ທຶນເຈົ້າຂອງ		**102.551.624.853**	**96.930.008.955**

ແຫ່ງ ສປປ ລາວ
ບໍລິສັດ
ມະຫະທຶນ ເຊົ່າສິນເຊື່ອ
ມະຫາຊົນ
MAHATHUEN LEASING
PUBLIC
COMPANY

ທ່ານ ມານິບ ຕຣີລິດວິໄສ
ຜູ້ອຳນວຍການໃຫ່ຍ

ວັນທີ: 8 ສິງຫາ 2022

ທ່ານ ທອງຖະຫວັນ ທອງແຖມ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 8 ສິງຫາ 2022

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຜົນໄດ້ຮັບ
ສຳລັບຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2022

	ບິດ ອະທິບາຍ	ທີ່ບທວນຄືນ 30 ມິຖຸນາ 2022 ກີບ	ທີ່ບທວນຄືນ 30 ມິຖຸນາ 2021 ກີບ
ລາຍຮັບຈາກດອກເບ້ຍ - ສັນຍາເຊົ່າການເງິນ ແລະ ສິນເຊື່ອຜ່ອນຊຳລະ		15.354.064.381	13.043.001.510
ລວມລາຍຮັບ		**15.354.064.381**	**13.043.001.510**
ລາຍຮັບອື່ນ		684.777.834	647.166.572
ລາຍຈ່າຍໃນການບໍລິຫານ		(7.221.016.465)	(6.531.324.323)
ໜີ້ເສຍ ແລະ ໜີ້ຕ້ອງຮັບທວງຍາກ		(798.240.462)	(467.420.026)
ຂາດທຶນສຸດທິຈາກອັດຕາແລກປ່ຽນ	14	(5.864.877.378)	(574.003.083)
ກຳໄລຈາກການດຳເນີນງານ		**2.154.707.910**	**6.117.420.650**
ລາຍຈ່າຍການເງິນ		(1.577.652.163)	(831.872.311)
ກຳໄລສຸດທິກ່ອນອາກອນ		**577.055.747**	**5.285.548.339**
ລາຍຈ່າຍອາກອນ	16	(1.299.642.996)	(741.027.516)
ກຳໄລສຸດທິ		**(722.587.249)**	**4.544.520.823**
ກຳໄລ ຕໍ່ຮຸ້ນ			
ກຳໄລ ພື້ນຖານ ຕໍ່ຮຸ້ນ	17	(1,81)	11,36

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ MAHATHUEN LEASING PUBLIC COMPANY

ທ່ານ ມານິບ ຕຣິລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 8 ສິງຫາ 2022

ທ່ານ ທອງຖະຫວັນ ທອງແຖມ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 8 ສິງຫາ 2022

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2022

	ຍິດ ອະທິບາຍ	ທຶນຈົດທະບຽນ ກີບ	ສ່ວນເພີ່ມມູນຄ່າຮຸ້ນ ກີບ	ກຳໄລສະສົມ ຈັດສັນ ຄັງສະສົມຕາມລະບຽບການ ກີບ	ກຳໄລສະສົມ ທີ່ຍັງບໍ່ໄດ້ຈັດສັນ ກີບ	ລວມ ກີບ
ໃນວັນທີ 1 ມັງກອນ 2021		40.000.000.000	12.832.667.550	4.026.672.320	13.900.722.073	70.760.061.943
ກຳໄລ		-	-	-	4.544.520.823	4.544.520.823
ຈ່າຍເງິນປັນຜົນ	15	-	-	-	(6.200.000.000)	(6.200.000.000)
ໃນວັນທີ 30 ມິຖຸນາ 2021		**40.000.000.000**	**12.832.667.550**	**4.026.672.320**	**12.245.242.896**	**69.104.582.766**
ໃນວັນທີ 1 ມັງກອນ 2021		40.000.000.000	12.832.667.550	4.785.832.107	14.533.160.157	72.151.659.814
ກຳໄລ		-	-	-	(722.587.249)	(722.587.249)
ຈ່າຍເງິນປັນຜົນ	15	-	-	-	(2.280.000.000)	(2.280.000.000)
ໃນວັນທີ 30 ມິຖຸນາ 2021		**40.000.000.000**	**12.832.667.550**	**4.785.832.107**	**11.530.572.908**	**69.149.072.565**

ທ່ານ ມານິບ ຕຣິລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 8 ສິງຫາ 2022

ທ່ານ ທອງຖະຫວັນ ທອງແຖມ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 8 ສິງຫາ 2022

ຍິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 8 - 16 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ໃບລາຍງານກະແສເງິນສົດ
ສຳລັບຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2022

	ບົດອະທິບາຍ	ທີ່ຍອນຄົນ 30 ມິຖຸນາ 2022 ກີບ	ທີ່ຍອນຄົນ 30 ມິຖຸນາ 2021 ກີບ
ກະແສເງິນສົດຈາກກິດຈະກຳການດຳເນີນງານ:			
ກຳໄລກ່ອນອາກອນ		577.055.747	5.285.548.339
ດັດແກ້ເພື່ອສົມທຽບກຳໄລສຸດທິ ແລະ ເງິນສົດສຸດທິ			
ໜີ້ເສຍ ແລະ ໜີ້ຕ້ອງຮັບທວງຍາກ		798.240.462	467.420.026
ຄ່າຫມາຍໜ້າລໍຖ້າຕັດບັນຊີ		2.010.766.108	1.973.015.045
ການສູນເສຍມູນຄ່າຂອງຊັບສິນຖືໄວ້ເພື່ອຂາຍ		(5.000.000)	57.500.000
ຄ່າຫຼ້ຍຫ້ຽນ	10,11	273.803.802	250.769.646
ລາຍຈ່າຍດອກເບ້ຍ		1.577.652.163	831.872.311
ຂາດທຶນຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ		5.909.053.707	412.413.784
ກຳໄລ ຈາກການດຳເນີນງານກ່ອນການປ່ຽນແປງທຶນໝຸນວຽນ		**11.141.571.989**	**9.278.539.151**
ການປ່ຽນແປງທຶນໝຸນວຽນ:			
ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ		(6.622.618.781)	(5.460.466.732)
ຊັບສິນຖືໄວ້ເພື່ອຂາຍ		47.775.281	(506.885.266)
ຊັບສິນບໍ່ໝຸນວຽນອື່ນໆ		(81.363.428)	(97.658.548)
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		(2.434.413.519)	(1.170.939.575)
ໜີ້ສິນໝຸນວຽນອື່ນໆ		(35.883.668)	548.529
ໜີ້ສິນບໍ່ໝຸນວຽນອື່ນໆ		8.450.000	70.875.000
ເງິນສົດຈາກກິດຈະກຳດຳເນີນງານ		**2.023.517.874**	**2.114.012.559**
ລາຍຈ່າຍຄ່າຫມາຍໜ້າ		(2.012.050.000)	(2.104.500.000)
ລາຍຈ່າຍດອກເບ້ຍ		(1.541.977.194)	(1.137.483.795)
ລາຍຈ່າຍອາກອນ		(1.166.585.046)	(290.000.000)
ເງິນສົດສຸດທິຈາກ/(ໃຊ້ໄປໃນ)ກິດຈະກຳດຳເນີນງານ		**(2.697.094.366)**	**(1.417.971.236)**
ກະແສເງິນສົດຈາກກິດຈະກຳການລົງທຶນ			
ເງິນສົດຈ່າຍຊື້ຊັບສິນບັດຖົງທີ່ມີຕົວຕົນ	10	(57.407.326)	(87.204.060)
ເງິນຝາກຄ້ຳປະກັນເງິນກູ້		(2.000.000.000)	-
ເງິນສົດສຸດທິໃຊ້ໄປໃນກິດຈະກຳການລົງທຶນ		**(2.057.407.326)**	**(87.204.060)**

ທ່ານ ມານິບ ຕຣີລິດວິໄສ
ຜູ້ອຳນວຍການໃຫ່ຍ

ວັນທີ: 8 ສິງຫາ 2022

ທ່ານ ທອງຖະຫວັນ ທອງແຖມ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 8 ສິງຫາ 2022

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 8 - 16 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2022

	ບົດ ອະທິບາຍ	ທົບທວນຄືນ 30 ມິຖຸນາ 2022 ກີບ	ທົບທວນຄືນ 30 ມິຖຸນາ 2021 ກີບ
ກະແສເງິນສົດຈາກກິດຈະກຳການເງິນ			
ເງິນສົດໄດ້ຮັບຈາກເງິນກູ້ຢືມ	13	5.000.000.000	-
ຈ່າຍຄືນເງິນກູ້ຢືມ	13	(243.337.442)	-
ຊຳລະຄືນໜີ້ສິນ ພາຍໃຕ້ສັນຍາເຊົ່າທາງການເງິນ		-	(78.339.545)
ຈ່າຍເງິນປັນຜົນ	15	(2.280.000.000)	(6.200.000.000)
ເງິນສົດສຸດທິຈາກ(ໃຊ້ໄປໃນ)ກິດຈະກຳການເງິນ		**2.476.662.558**	**(8.788.255.365)**
ຫຼຸດລົງສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		**(277.839.135)**	**(7.783.514.841)**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດຕົ້ນປີ		13.057.187.126	12.404.353.323
ກຳໄລ/(ຂາດທຶນ) ໃນການແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		146.050.157	13.973.649
ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍປີ		**12.925.398.148**	**4.634.812.131**
ລາຍການທີ່ສຳຄັນທີ່ບໍ່ແມ່ນເງິນສົດ;			
ບັນຊີໜີ້ຕ້ອງສົ່ງຂອງຊັບສິນຄົງທີ່ບໍ່ມີຕົວຕົນ	10	-	70.500.000

ທ່ານ ມານິບ ຕຣິລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 8 ສິງຫາ 2022

ທ່ານ ທອງຖະຫວັນ ທອງແຖມ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 8 ສິງຫາ 2022

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 8 - 16 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

1 ຂໍ້ມູນທົ່ວໄປ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ບໍລິສັດ) ແມ່ນ ບໍລິສັດທີ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບລາວ ແລະ ທີ່ໄດ້ຈົດທະບຽນ ຕັ້ງຢູ່ໃນ ສປປ ລາວ. ບໍລິສັດໄດ້ຈົດທະບຽນສ້າງຕັ້ງ ກັບກະຊວງອຸດສາຫະກຳ ແລະ ການຄ້າ ໃນວັນທີ 2 ກັນຍາ 2011. ບໍລິສັດໄດ້ເລີ່ມດຳເນີນທຸລະກິດພາຍຫຼັງທີ່ໄດ້ຮັບໃບອະນຸຍາດຈາກທະນາຄານແຫ່ງສປປ ລາວ ໃນວັນທີ 11 ມິຖຸນາ 2012.

ເມື່ອວັນທີ 13 ມິຖຸນາ 2018, ບໍລິສັດ ໄດ້ຮັບອະນຸຍາດຈາກຄະນະກຳມະການຄຸ້ມຄອງຫຼັກຊັບລາວ ໃຫ້ຈຳໜ່າຍຮຸ້ນແກ່ປະຊາຊົນທົ່ວໄປເປັນຄັ້ງທຳອິດ.

ສຳນັກງານໃຫຍ່ຂອງບໍລິສັດ ຕັ້ງຢູ່ເຮືອນເລກທີ 628, ບ້ານໂພນພະເນົາ, ກິໂລແມັດ 5, ຖະໜົນໄກສອນພົມວິຫານ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

ກິດຈະກຳຫຼັກ ຂອງບໍລິສັດແມ່ນການສະໜອງສິນເຊື່ອສຳລັບລູກຄ້າລາຍຍ່ອຍໂດຍການໃຫ້ສິນເຊື່ອແກ່ລູກຄ້າລາຍບຸກຄົນເພື່ອຊື້ລົດຈັກແລະລົດໄຖ.

ເອກະສານລາຍງານການເງິນ ໄດ້ມີການອະນຸມັດໃຫ້ອອກບົດລາຍງານ ໂດຍຄະນະບໍລິຫານໃນວັນທີ 8 ສິງຫາ 2022.

2 ພື້ນຖານໃນການກະກຽມບົດລາຍງານ ແລະ ນະໂຍບາຍການບັນຊີ

ເອກະສານລາຍງານການເງິນກາງປີໄດ້ຖືກສ້າງຂຶ້ນໂດຍອີງຕາມນະໂຍບາຍການບັນຊີ ຂອງບໍລິສັດດັ່ງທີ່ໄດ້ອະທິບາຍໄວ້ໃນລາຍລະອຽດເພີ່ມເຕີມໃນເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2021. ເອກະສານລາຍງານການເງິນຫຼັກເຊັ່ນ: ໃບລາຍງານຖານະການເງິນ, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນຂອງຕົນເອງ ແລະ ໃບລາຍງານກະແສເງິນສົດ ຖືກນຳສະເໜີໃນຮູບແບບທີ່ສອດຄ່ອງກັບເອກະສານລາຍງານການເງິນປະຈຳປີໂດຍປະຕິບັດຕາມລະບຽບການລາຍງານ ແລະ ການເປີດເຜີຍທີ່ອອກໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ເອກະສານລາຍງານການເງິນສະບັບນີ້ ຄວນອ່ານຄູ່ກັບເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ 31 ທັນວາ 2021.

ໃນການກະກຽມເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຜູ້ບໍລິຫານຕ້ອງໃຊ້ການຄາດຄະເນ ແລະ ຕັ້ງຂໍ້ສົມມຸດທີ່ມີຜົນກະທົບຕໍ່ຊັບສິນ ແລະ ໜີ້ສິນທີ່ຖືກລາຍງານ, ການເປີດເຜີຍຊັບສິນ ແລະ ໜີ້ສິນທີ່ອາດເກີດຂຶ້ນ ໃນວັນທີຂອງເອກະສານລາຍງານການເງິນ, ລາຍຮັບ ແລະ ລາຍຈ່າຍໃນໄລຍະເວລາທີ່ລາຍງານ, ເຖິງແມ່ນວ່າການຄາດຄະເນເຫຼົ່ານີ້ແມ່ນອີງໃສ່ຄວາມຮູ້ຂອງຜູ້ບໍລິຫານກ່ຽວກັບເຫດການ ແລະ ການກະທຳໃນປະຈຸບັນກໍ່ຕາມ, ແຕ່ຜົນໄດ້ຮັບຕົວຈິງອາດຈະແຕກຕ່າງຈາກການຄາດຄະເນເຫຼົ່ານັ້ນ.

3 ເຫດການທີ່ສຳຄັນໃນໄລຍະປະຈຸບັນ

ການລະບາດຂອງເຊື້ອພະຍາດ COVID-19:

ການແຜ່ລະບາດຂອງເຊື້ອພະຍາດ COVID-19 ໃນປະເທດລາວມີການເພີ່ມຂຶ້ນຢ່າງເປັນສາລະສຳຄັນໃນຊ່ວງເດືອນ ເມສາ ຫາ ພຶດສະພາ 2022, ຢ່າງໃດກໍ່ຕາມ, ເນື່ອງຈາກປະຊາກອນສ່ວນໃຫ່ຍ ໂດຍສະເພາະໃນນະຄອນຫຼວງວຽງຈັນ ໄດ້ຮັບວັກຊິນເຂັ້ມ 2 ແລະ ເຂັ້ມ 3. ດັ່ງນັ້ນຈຶ່ງເຮັດໃຫ້ສະພາບການລະບາດບໍ່ຮ້າຍແຮງເມື່ອທຽບກັບປີຜ່ານມາ, ອີກທັງລັດຖະບານໄດ້ເປີດປະເທດໃຫ້ນັກທ່ອງທ່ຽວຕ່າງປະເທດ ພາຍຫຼັງເດືອນ ພຶດສະພາ ປີ 2022. ດັ່ງນັ້ນ, ໃນປັດຈຸບັນ COVID-19 ແມ່ນບໍ່ມີການແຜ່ນລະບາດຫຼາຍ ເຖິງແນວໃດກໍ່ຕາມ ຜູ້ບໍລິຫານຍັງສືບຕໍ່ຕິດຕາມຢ່າງຕໍ່ເນື່ອງ ແລະ ປະເມີນຜົນກະທົບທາງດ້ານການເງິນຢ່າງເປັນປົກກະຕິ ກ່ຽວກັບການປະເມີນຊັບສິນ, ການສຳຮອງໜີ້ເສຍ ແລະ ພາລະຜູກພັນອື່ນໆທີ່ອາດເກີດຂຶ້ນ.

4 ການຄາດຄະເນ

ການສ້າງເອກະສານລາຍງານການເງິນ ແມ່ນຮຽກຮ້ອງໃຫ້ຜູ້ບໍລິຫານໃຊ້ດຸນພິນິດ, ການຄາດຄະເນ ແລະ ການສົມມຸດຕິຖານທີ່ມີຜົນກະທົບຕໍ່ນະໂຍບາຍການບັນຊີ ແລະ ການລາຍງານຕົວເລກ ຂອງຊັບສິນ ແລະ ໜີ້ສິນ, ລາຍຮັບ ແລະ ລາຍຈ່າຍ ເຊິ່ງໃນຄວາມເປັນຈິງອາດຈະມີຄວາມແຕກຕ່າງຈາກການຄາດຄະເນໄວ້.

ໃນການກະກຽມເອກະສານລາຍງານສະບັບນີ້, ຜູ້ບໍລິຫານໄດ້ໃຊ້ດຸນພິນິດທີ່ເປັນສາລະສຳຄັນໂດຍປະອີງຕາມນະໂຍບາຍການບັນຊີ ຂອງບໍລິສັດ ແລະ ແຫຼ່ງທີ່ມາທີ່ສຳຄັນຂອງຄວາມບໍ່ແນ່ນອນຂອງການປະມານການເຊັ່ນດຽວກັບທີ່ໃຊ້ກັບເອກະສານລາຍງານການເງິນສຳລັບປີສິ້ນສຸດວັນທີ 31 ທັນວາ 2021.

5 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	ທົບທວນຄືນ 30 ມິຖຸນາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ເງິນສົດໃນມື	28.518.881	41.035.623
ເງິນຝາກໃນທະນາຄານ	10.896.879.267	13.016.151.503
ລວມ	**10.925.398.148**	**13.057.187.126**

6 ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ

	ທົບທວນຄືນ 30 ມິຖຸນາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ໝຸນວຽນ		
ສັດສ່ວນໝຸນວຽນຂອງໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ	1.251.413.844	1.142.390.791
ສັດສ່ວນໝຸນວຽນຂອງລູກໜີ້ສິນເຊື່ອຜ່ອນຊຳລະ	53.014.321.013	49.443.374.420
	54.265.734.857	**50.585.765.211**
ເພີ່ມ ຕົ້ນທຶນທາງກົງ	1.381.498.941	1.366.237.006
ຫັກ ເງິນແຮບ້ອງໜີ້ຕ້ອງຮັບທີ່ເກັບຄືນບໍ່ໄດ້	(4.935.400.143)	(4.255.911.025)
	50.711.833.655	**47.696.091.192**
ບໍ່ໝຸນວຽນ		
ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ	470.653.270	323.369.606
ລູກໜີ້ສິນເຊື່ອຜ່ອນຊຳລະ	33.921.943.278	31.017.898.812
	34.392.596.548	**31.341.268.418**
ເພີ່ມ ຕົ້ນທຶນທາງກົງ	1.279.738.567	1.293.716.612
ຫັກ ເງິນແຮບ້ອງໜີ້ຕ້ອງຮັບທີ່ເກັບຄືນບໍ່ໄດ້	(665.678.252)	(543.798.909)
	35.006.656.862	**32.091.186.121**
ລວມ	**85.718.490.517**	**79.787.277.313**

6 ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ (ຕໍ່)

ໃນວັນທີ 30 ມິຖຸນາ 2022, ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ໜີ້ຕ້ອງຮັບເງິນກູ້ຜ່ອນຊຳລະໃນໃບລາຍງານຖານະການເງິນ, ສາມາດວິເຄາະອາຍຸການໄດ້ດັ່ງນີ້:

	ທີ່ບທວນຄືນ 30 ມິຖຸນາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ບໍ່ຄົບກຳນົດ	67.515.490.377	59.043.910.017
1 – 3 ເດືອນ	14.347.564.877	16.691.343.418
4 – 6 ເດືອນ	1.444.024.782	1.812.386.831
7 – 12 ເດືອນ	1.543.543.350	1.394.089.145
ເກີນ 12 ເດືອນ	3.807.708.020	2.985.304.218
	88.658.331.405	**81.927.033.629**
ເພີ່ມ ຕົ້ນທຶນທາງກົງ	2.661.237.508	2.695.953.618
ຫັກ ເງິນແຮບ້ອງໜີ້ຕ້ອງຮັບທີ່ເກັບຄືນບໍ່ໄດ້	(5.601.078.395)	(4.799.709.934)
ລວມ	**85.718.490.517**	**79.787.277.313**

7 ຊັບສິນຖືໄວ້ເພື່ອຂາຍ, ສຸດທິ

	ທີ່ບທວນຄືນ 30 ມິຖຸນາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ລົດຈັກ	243.761.053	291.536.334
ຫັກ ເງິນແຮການສູນເສຍມູນຄ່າຂອງຊັບສິນຖືໄວ້ເພື່ອຂາຍ	(23.750.000)	(28.750.000)
ລວມ	**220.011.053**	**262.786.334**

8 ຊັບສິນໝຸນວຽນອື່ນໆ

	ທີ່ບທວນຄືນ 30 ມິຖຸນາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ລາຍຈ່າຍລ່ວງໜ້າ - ຊັດສ່ວນໝຸນວຽນ	314.458.318	449.969.869
ຊຳລະເງິນລ່ວງໜ້າ	300.870.420	42.757.320
ອື່ນໆ	34.548.683	10.368.000
ລວມ	**649.877.421**	**503.095.189**

9 ເງິນຝາກຄ້ຳປະກັນເງິນກູ້

ແມ່ນເງິນທີ່ບໍ່ສາມາດນຳໃຊ້ໄດ້ ເຊິ່ງລວມມີບັນຊີເງິນຝາກມີກຳນົດ 1.500 ລ້ານກີບ ແລະ ບັນຊີກະແສລາຍວັນທີ່ຕ້ອງມີເງິນຂັ້ນຕ່ຳ 500 ລ້ານກີບ ທີ່ໃຊ້ເປັນເງິນຄ້ຳປະກັນສຳລັບການກູ້ຢືມນຳທະນາຄານລາວ-ຝຣັ່ງ ຕະຫຼອດໄລຍະສັນຍາກູ້ຢືມ (ບົດອະທິບາຍ 13).

10 ຊັບສິນຄົງທີ່ມີຕົວຕົນ, ສຸດທິ

	ກີບ
ໃນວັນທີ 1 ມັງກອນ 2022 – ກວດສອບ	939.382.351
ເພີ່ມຂຶ້ນ	57.407.327
ຫັກ: ຄ່າຫຼ້ຍຫ້ຽນ	(235.876.938)
ມູນຄ່າຕາມບັນຊີສຸດທິ ໃນວັນທີ 30 ມິຖຸນາ 2022 – ທີ່ບທອນຄືນ	**760.912.740**

11 ຊັບສິນບໍ່ມີຕົວຕົນ, ສຸດທິ

	ກີບ
ໃນວັນທີ 1 ມັງກອນ 2022 – ກວດສອບ	205.780.698
ເພີ່ມຂຶ້ນ	-
ຫັກ: ຄ່າເສື່ອມມູນຄ່າ	(37.926.864)
ມູນຄ່າຕາມບັນຊີສຸດທິ ໃນວັນທີ 30 ມິຖຸນາ 2022 – ທີ່ບທອນຄືນ	**167.853.834**

12 ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ

	ທີ່ບທອນຄືນ 30 ມິຖຸນາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ໜີ້ຕ້ອງສົ່ງການຄ້າ	872.991.000	2.727.309.000
ລາຍຈ່າຍຄ້າງຈ່າຍ	1.217.789.888	1.451.698.670
ໜີ້ຕ້ອງສົ່ງການຄ້າ – ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍ 18)	-	313.206.000
ໜີ້ຕ້ອງສົ່ງອື່ນໆ – ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍ18)	-	38.750.000
ໜີ້ຕ້ອງສົ່ງອາກອນ	55.557.937	49.788.674
ລວມ	**2.146.338.825**	**4.580.752.344**

13 ເງິນກູ້ຢືມ

	ທີ່ບທວນຄືນ 30 ມິຖຸນາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ໝູນວຽນ	19.581.869.916	-
ບໍ່ໝູນວຽນ	9.229.192.642	17.894.400.000
ລວມ	**28.811.062.558**	**17.894.400.000**

ລາຍການເຄື່ອນໄຫວຂອງເງິນກູ້ຢືມ ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2022 ມີດັ່ງລຸ່ມນີ້:

	ທີ່ບທວນຄືນ 30 ມິຖຸນາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ຍອດຍົກມາມູນຄ່າຕາມບັນຊີ, ສຸດທິ	17.894.400.000	11.936.400.000
ເງິນກູ້ຢືມທີ່ເພີ່ມ	5.000.000.000	4.083.200.000
ຊຳລະເງິນກູ້ຢືມຄືນ	(243.337.442)	-
ຂາດທຶນຈາກການຕີມູນຄ່າອັດຕາແລກປ່ຽນ	6.160.000.000	1.874.800.000
ຍອດເຫຼືອມູນຄ່າຕາມບັນຊີ, ສຸດທິ	**28.811.062.558**	**17.894.400.000**

ວັນທີ 31 ມີນາ 20221, ບໍລິສັດໄດ້ເຊັ່ນສັນຍາກູ້ຢືມເງິນກັບທະນາຄານ ລາວ-ຝຣັ່ງ (BFL) ມູນຄ່າ 5 ຕື້ກີບ, ໃນໄລຍະ 3 ປີ ແລະ ດອກເບ້ຍ 9% ຕໍ່ປີ (ເງິນຕົ້ນ ແລະ ດອກເບ້ຍຊຳລະລາຍເດືອນ), ເລີ່ມຕັ້ງແຕ່ ວັນທີ 8 ພຶດສະພາ 2022 ຫາ 8 ເມສາ 2025.

ຍອດເງິນກູ້ນີ້ແມ່ນຄ້ຳປະກັນດ້ວຍບັນຊີເງິນຝາກມີກຳນົດ ແລະ ເງິນຝາກກະແສລາຍວັນຕະຫຼອດໄລຍະສັນຍາກູ້ຢືມ (ບົດອະທິບາຍ 9)

14 ຂາດທຶນສຸດທິຈາກອັດຕາແລກປ່ຽນ

ໃນໄລຍະ 6 ເດືອນຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2022, ສະກຸນເງິນກີບ (LAK) ແມ່ນອ່ອນຄ່າເມື່ອທຽບກັບເງິນໂດລາສະຫະລັດ (US Dollars) ດັ່ງນັ້ນ, ຈຶ່ງເກີດມີຜົນກະທົບທີ່ເປັນສາລະສຳຄັນໂດຍຂາດທຶນຈາກອັດຕາແລກປ່ຽນຈາກຍອດເງິນກູ້ຢືມໄລຍະຍາວ ເຊິ່ງເປັນເງິນໂດລາສະຫະລັດ (US Dollars).

15 ເງິນປັນຜົນ

ໃນກອງປະຊຸມຜູ້ຖືຮຸ້ນສາມັນປະຈຳປີ 2020 ໃນວັນທີ 27 ເມສາ 2021, ຜູ້ຖືຮຸ້ນໄດ້ອະນຸມັດການຈ່າຍເງິນປັນຜົນປະຈຳປີຈາກກຳໄລສຸດທິ 12 ເດືອນ ໄລຍະສິ້ນສຸດ ວັນທີ 31 ທັນວາ 2020 ໃນມູນຄ່າ 155 ກີບຕໍ່ຮຸ້ນ, ລວມມູນຄ່າທັງໝົດ 6.200 ລ້ານກີບ ແລະ ຈັດສັນກຳໄລສຸດທິເພື່ອສຳຮອງຕາມກົດໝາຍ ຈຳນວນເງິນ 774.478.318 ກີບ.

ໃນກອງປະຊຸມຜູ້ຖືຮຸ້ນສາມັນປະຈຳປີ 2021 ໃນວັນທີ 28 ເມສາ 2022, ຜູ້ຖືຮຸ້ນໄດ້ອະນຸມັດການຈ່າຍເງິນປັນຜົນປະຈຳປີຈາກກຳໄລສຸດທິ 12 ເດືອນ ໄລຍະສິ້ນສຸດ ວັນທີ 31 ທັນວາ 2021 ໃນມູນຄ່າ 57 ກີບຕໍ່ຮຸ້ນ (ກ່ອນການປ່ຽນແປງມູນຄ່າໃນໃບຮຸ້ນ ຂອງບໍລິສັດ ຈາກລາຄາ 1.000 ກີບ ມາເປັນ 100 ກີບຕໍ່ຮຸ້ນ) ຫຼື ມູນຄ່າ 5,7 ກີບຕໍ່ຮຸ້ນ (ຫຼັງການປ່ຽນແປງມູນຄ່າໃນໃບຮຸ້ນ) ລວມ ມູນຄ່າທັງ ໝົດ 2.280 ລ້ານກີບ ແລະ ຈັດສັນກຳໄລສຸດທິເພື່ອສຳຮອງຕາມກົດໝາຍ ຈຳນວນເງິນ 759.159.787 ກີບ.

16 ອາກອນລາຍໄດ້

ບໍລິສັດໄດ້ຮັບສິດທິພິເສດຕາມກົດໝາຍສ່ວຍສາອາກອນລາວໂດຍການຫຼຸດອັດຕາອາກອນກຳໄລ 5% ຂອງອັດຕາປົກກະຕິເປັນ ເວລາ 4ປີ ນັບຕັ້ງແຕ່ວັນທີຈົດທະບຽນເຂົ້າຕະຫຼາດຫຼັກຊັບລາວ ວັນທີ 13 ມິຖຸນາ 2018.

ອີງຕາມກົດໝາຍສ່ວຍສາອາກອນ ສະບັບເລກທີ 259 ທີ່ມີຜົນບັງຄັບໃຊ້ໃນວັນທີ 1 ມັງກອນ 2020 ເປັນຕົ້ນມາ, ບໍລິສັດໄດ້ຄິດໄລ່ອາກອນກຳໄລ ທີ່ຕ້ອງເສຍອາກອນໃນອັດຕາ 13% ເຊິ່ງຖືເປັນສິດທິພິເສດສຳລັບບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ ພາຍຫຼັງທີ່ພິຈາລະນາລາຍຮັບ ແລະ ລາຍຈ່າຍ ທີ່ບໍ່ສາມາດຫັກອອກໄດ້ ຕາມກົດໝາຍສ່ວຍສາອາກອນລາວ, ອັດຕາດັ້ງກ່າວແມ່ນໃຊ້ໄດ້ຈົນເຖິງວັນທີ 31 ທັນວາ 2021 ແລະ ອັດຕາ 20% ແມ່ນເລີ້ມນຳໃຊ້ຕັ້ງແຕ່ວັນທີ 1 ມັງກອນ 2022.

ຢູ່ໃນ ສປປ ລາວ, ການແຈ້ງຈ່າຍອາກອນລາຍໄດ້ຖືກກວດກາເປັນປົກກະຕິໂດຍລະອຽດ ຈາກເຈົ້າໜ້າທີ່ກ່ຽວຂ້ອງ. ນອກຈາກນັ້ນ, ບັນຫາດ້ານອາກອນທີ່ຖືກຍົກຂຶ້ນມາໃນການທົບທວນຄືນອາດຈະຕ້ອງມີການຕັດສິນ ແລະ ການຕີຄວາມທີ່ມີສາລະສຳຄັນ ຈາກພາກສ່ວນທີ່ກ່ຽວຂ້ອງ.

ການທົບທວນດັ່ງກ່າວ ອາດຈະເຮັດໃຫ້ມີການຈ່າຍອາກອນເພີ່ມເຕີມ ຫຼື ສົ່ງເງິນຄືນທີ່ເປັນສາລະສຳຄັນ ເຊິ່ງອາດຈະເປັນສິ່ງທີ່ສຳຄັນ ເຊິ່ງຈະສົ່ງຜົນໃຫ້ການຊຳລະ ຫຼື ຮັບຄືນໄດ້ຖືກຮັບຮູ້ວ່າເປັນການປັບອາກອນລາຍໄດ້ໃນປີທີ່ການທົບທວນຄືນສຳເລັດ.

17 ກຳໄລພື້ນຖານຕໍ່ຮຸ້ນ

ກຳໄລພື້ນຖານຕໍ່ຮຸ້ນແມ່ນຄິດໄລ່ໂດຍການຫານກຳໄລສຸດທິ ທີ່ເປັນຂອງຜູ້ຖືຮຸ້ນໂດຍສະເລ່ຍຕາມຈຳນວນຂອງຮຸ້ນສາມັນ ທີ່ມີທັ້ງໝົດ ດັ່ງຕໍ່ໄປນີ້:

	ທົບທວນຄືນ 30 ມິຖຸນາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ກຳໄລສຸດທິ ທີ່ເປັນຂອງຜູ້ຖືຮຸ້ນ (ກີບ)	(722.587.249)	4.544.520.823
ຈຳນວນຂອງຮຸ້ນສາມັນ (ຮຸ້ນ)	400.000.000	400.000.000
ກຳໄລພື້ນຖານຕໍ່ຮຸ້ນ (ກີບ)	(1,81)	11,36

18 ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ກ. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ ສຳລັບຫົກເດືອນຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2022 ມີດັ່ງນີ້:

	ທີ່ບທວນຄືນ 30 ມິຖຸນາ 2022 ກີບ	ທີ່ບທວນຄືນ 30 ມິຖຸນາ 2021 ກີບ
ການຊື້ສິນຄ້າ ແລະ ບໍລິການ:		
ບໍລິສັດ ມະຫະທຸນ ໂຮນດິ້ງ ຈຳກັດ		
ຄ່າຄ້ຳປະກັນ	1.344.782.049	758.106.019
	1.344.782.049	**758.106.019**
ພາກສ່ວນທີ່ກ່ຽວຂ້ອງອື່ນໆ*		
ຊື້ຊັບສິນເຊົ່າສິນເຊື່ອ	4.818.439.000	2.506.356.000
ຈ່າຍຄ່ານາຍໜ້າ	241.750.000	144.250.000
ລາຍຈ່າຍອື່ນໆ	68.250.000	27.870.000
	5.128.439.000	**2.678.476.000**
ລວມ	**6.473.221.049**	**3.436.582.019**

* ພາກສ່ວນທີ່ກ່ຽວຂ້ອງອື່ນໆແມ່ນທຸລະກຳລະຫວ່າງບໍລິສັດ ແລະ ຜູ້ສະໜອງທີ່ມີເຈົ້າຂອງແມ່ນໜຶ່ງໃນຄະນະບໍລິຫານ ຂອງບໍລິສັດ. ເຊິ່ງສະພາບໍລິຫານຊຸດດັ່ງກ່າວໄດ້ສິ້ນສຸດວາລະໃນວັນທີ 28 ເມສາ 2022. ອີງຕາມລະບຽບການກ່ຽວກັບ ພາກສ່ວນທີ່ກ່ຽວຂ້ອງທີ່ອອກໂດຍຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບລົງວັນທີ 26 ຕຸລາ 2016, ຜູ້ສະໜອງບໍ່ໄດ້ ຖືກພິຈາລະນາວ່າເປັນພາກສ່ວນທີ່ກ່ຽວຂ້ອງ. ດັ່ງນັ້ນ, ການເຮັດທຸລະກຳໃນໄລຍະ 6 ເດືອນຂ້າງເທິງສະແດງໃຫ້ເຫັນທຸລະ ກຳໃນລະຫວ່າງ 1 ມັງກອນ - 28 ເມສາ 2022 ເທົ່ານັ້ນ.

ຂ. ຍອດຄ້າງຊຳລະທີ່ເກີດຂຶ້ນຈາກການຂາຍ/ຊື້ ສິນຄ້າ/ບໍລິການ

	ທີ່ບທວນຄືນ 30 ມິຖຸນາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ໜີ້ຕ້ອງສົ່ງ:		
ພາກສ່ວນທີ່ກ່ຽວຂ້ອງອື່ນໆ*		
ໜີ້ຕ້ອງສົ່ງການຄ້າ	-	313.206.000
ໜີ້ຕ້ອງສົ່ງອື່ນໆ	-	38.750.000
ລວມ	**-**	**351.956.000**

* ອີງຕາມ ບົດອະທິບາຍ ກ ຂ້າງເທິງ, ນັບແຕ່ 29 ເມສາ 2022 ເປັນຕົ້ນໄປທຸລະກຳ ແລະ ຍອດຄ້າງຊຳລະຈາກຜູ້ສະໜອງ ດັ່ງກ່າວຈະສະແດງພາຍໃຕ້ໜີ້ຕ້ອງສົ່ງການຄ້າ.

18 ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ຄ. ຄ່າຕອບແທນຜູ້ບໍລິຫານຫຼັກ

ຄ່າຕອບແທນໃຫ້ຜູ້ບໍລິຫານມີດັ່ງຕໍ່ໄປນີ້:

	ທີ່ບທວນຄືນ 30 ມິຖຸນາ 2022 ກີບ	ທີ່ບທວນຄືນ 30 ມິຖຸນາ 2021 ກີບ
ເງິນເດືອນ ແລະ ອື່ນໆ	434.500.000	418.500.000

19 ພາລະຜູກພັນ

ກ. ພາລະຜູກພັນຈາກການລົງທຶນ

ໃນວັນທີ 30 ມິຖຸນາ 2022, ບໍລິສັດບໍ່ໄດ້ມີພາລະຜູກພັນກ່ຽວຂ້ອງກັບຊອບແວຄອມພິວເຕີທີ່ຢູ່ໃນລະຫວ່າງການຕິດຕັ້ງ (2021: 23,54 ລ້ານ)

ຂ. ພາລະຜູກພັນຕາມສັນຍາເຊົ່າເພື່ອການດຳເນີນງານ

ບໍລິສັດ ມີພາລະຜູກພັນຕາມສັນຍາເຊົ່າພື້ນທີ່ສຳນັກງານໄລຍະຍາວ ສຳລັບການເຊົ່າພື້ນທີ່ຫ້ອງການ

ໃນວັນທີ 30 ມິຖຸນາ 2022 ແລະ ວັນທີ 31 ທັນວາ 2021, ພາລະຜູກພັນຕາມສັນຍາເຊົ່າເພື່ອການດຳເນີນງານແຕ່ບໍ່ໄດ້ຮັບຮູ້ເປັນໜີ້ສິນມີດັ່ງນີ້:

	ທີ່ບທວນຄືນ 30 ມິຖຸນາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ພາຍໃນ 1 ປີ	318.594.693	126.981.858
ເກີນ 1 ປີ ແຕ່ບໍ່ເກີນ 5 ປີ	1.544.233.269	1.340.322.412
ເກີນ 5 ປີ	-	31.006.070
ລວມ	**1.862.827.962**	**1.498.310.340**

20 ເຫດການເກີດຂຶ້ນພາຍຫຼັງວັນທີ່ອອກບົດລາຍງານທາງການເງິນ

ບໍ່ມີເຫດການທີ່ເປັນສາລະສຳຄັນຫຼັງບົດລາຍງານຖານະການເງິນ ທີ່ມີຜົນກະທົບທີ່ເປັນສາລະສຳຄັນຕໍ່ຕົວເລກໃນຂໍ້ມູນການເງິນການປີ ຂອງບໍລິສັດ.